| ຂໍ້ມູນທີ່ໄດ້ຮັບຈາກຂະແໜງການທີ່ກ່ຽວຂ້ອງ | |
|---|---|
| ຊື່ໃບອະນຸຍາດ | ໃບຕິດຕາມການຖືບັນຊີ |
| **ປະເພດເອກະສານ** | ອື່ນໆ |
| **ວັນທີແກ້ໄຂຂໍ້ມູນລ່າສຸດ** | 04.01.2018 |
| **ພາກສ່ວນຮັບຜິດຊອບ** | ກົມບັນຊີ |
| **ຜູ້ທີ່ສາມາດຍື່ນຂໍເອກະສານ** | ຫົວໜ່ວຍທຸລະກິດ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ຊຶ່ງມີຖານະເປັນນິຕິບຸກຄົນ ແລະ ວິສາຫະກິດທີ່ດໍາເນີນການທຸລະກິດຊົ່ວຄາວ ຊຶ່ງໄດ້ຮັບໃບຕິດຕາມການມອບພັນທະ ຈາກຂະແໜງສ່ວຍສາອາກອນ ຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ (ໝວດທີ 1, ຂໍ້ 4 ຂອງບົດແນະນໍາ ເລກທີ 0928). |
| **ເງື່ອນໄຂໃນການຂໍເອກະສານ** | ຫົວໜ່ວຍຖືບັນຊີວິສາຫະກິດ ຕ້ອງສົ່ງເອກະສານລາຍງານການເງິນປະຈໍາປີ ແລະ ບົດລາຍງານການກວດສອບ (ຖ້າມີ) ໃຫ້ຂະແໜງບັນຊີທີ່ຕົນຂຶ້ນກັບ ແລະ ຂະແໜງການອື່ນຕາມລະບຽບກົດໝາຍກໍານົດ ພາຍໃນ 3 ເດືອນ ຫຼັງຈາກປິດບັນຊີປະຈໍາປີ (ບໍ່ໃຫ້ກາຍວັນທີ 31 ມີນາຂອງທຸກໆປີ) (ໝວດທີ 3, ຂໍ້ 9 ຂອງບົດແນະນໍາ ເລກທີ 0928). |

| ກົດໝາຍ ແລະ ນິຕິກໍາອື່ນໆ ທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່** | **ເລກທີ** | **ລົງວັນທີ** | **ໝາຍເຫດ** |
| ຄໍາແນະນໍາ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການບັນຊີ | 531/ກງ | 26.02.2016 | ມາດຕາ 25 |
| ກົດໝາຍວ່າດ້ວຍ ການບັນຊີ (ສະບັບປັບປຸງ) | 47/ສພຊ | 26.12.2013 | ມາດຕາ 31 & 48 |
| ບົດແນະນໍາ ການອອກໃບຕິດຕາມການຖືບັນຊີ ຂອງຫົວໜ່ວຍຖືບັນຊີວິສາຫະກິດ | 0928/ກງ | 27.03.2019 | |

| ໃບອະນຸຍາດດໍາເນີນການ ຫລື ເອກະສານທີ່ຈໍາເປັນ ຫລື ຕິດພັນ | | |
|---|---|---|
| **ຊື່** | **ປະເພດ** | **ໝາຍເຫດ** |
| ${SUPPORT_NAME} | ${SUPPORT_TYPE} | ${SUPPORT_COMMENT} |

| ເອກະສານທີ່ຕ້ອງປະກອບສໍາລັບການຍື່ນຂໍເອກະສານ | | |
|---|---|---|
| **ຊື່ເອກະສານ** | **ປະເພດເອກະສານ** | **ຕົວຢ່າງເອກະສານ** |
| ${ATTACHMENT_NAME} | ${ATTACHMENT_TYPE} | ${ATTACHMENT_FILE} |

| ເອກະສານທີ່ຕ້ອງປະກອບສໍາລັບການຕໍ່ອາຍຸ |
|---|

| ຊື່ເອກະສານ | ປະເພດເອກະສານ | ຕົວຢ່າງເອກະສານ |
|---|---|---|
| ${ATTACHMENT_NAME_RENEW} | ${ATTACHMENT_TYPE_RENEW} | ${ATTACHMENT_FILE_RENEW} |

| **ຮູບແບບການຍື່ນເອກະສານ** | | |
|---|---|---|
| **ການຍື່ນເອກະສານ** | ຢູ່ທີ່ຫ້ອງການເຈົ້າໜ້າທີ່ | |
| **ທີ່ຢູ່ຂອງພາກສ່ວນທີ່ຮັບຜິດຊອບ** | ກົມບັນຊີ, ກະຊວງການເງິນ | |
| **ໄລຍະເວລາໃນການພິຈາລະນາຄຳຮ້ອງ (ວັນ)** | 5 | ອອກໃບຕິດຕາມການຖືບັນຊີ ໃຫ້ສຳເລັດຊ້າສຸດ 5 ວັນລັດຖະການ ພາຍຫຼັງສຳເລັດການເຮັດບົດບັນທຶກ (ໝວດທີ 3, ຂໍ້ 12 ຂອງບົດແນະນຳ ເລກທີ 0928). |

| **ການຕໍ່ອາຍຸເອກະສານ** | |
|---|---|
| **ເອກະສານມີກຳນົດອາຍຸ ຫຼື ບໍ່?** | **ໃບອະນຸຍາດມີອາຍຸການນຳໃຊ້ຈັກເດືອນ?** |
| ມີ | 12 |
| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸເອກະສານ** | |

| | |
|---|---|
| **ຂັ້ນຕອນ ແລະ ເງື່ອນໄຂສໍາລັບການຕໍ່ອາຍຸໃບອະນຸຍາດ** | ໃບຕິດຕາມການຖືບັນຊີມີອາຍຸການນໍາໃຊ້ແຕ່ວັນທີ 1 ມັງກອນ ຫາ 31ທັນວາ. 1. ສໍາລັບຫົວໜ່ວຍວິສາຫະກິດ ທີ່ມີການຖືບັນຊີແລ້ວ ແຕ່ບໍ່ທັນມີໃບຕິດຕາມການຖືບັນຊີ ຫຼື ຫົວໜ່ວຍທີ່ສ້າງຕັ້ງຂຶ້ນໃໝ່ ຫຼື ຫົວໜ່ວຍທີ່ຫາກໍ່ເລີ່ມຈັດຕັ້ງປະຕິບັດວຽກງານບັນຊີ ໃຫ້ປະຕິບັດຕາມຂັ້ນຕອນດັ່ງນີ້: - ລົງກວດກາກັບທີ່;- ເຮັດບົດບັນທຶກເກັບກໍາຂໍ້ມູນການຈັດຕັ້ງປະຕິບັດວຽກງານບັນຊີ;- ອອກໃບຕິດຕາມການຖືບັນຊີປະຈໍາປີເມື່ອມີການສະເໜີ ຫຼື ສົ່ງເອກະສານລາຍງານການເງິນປະຈໍາປີ ເປັນຄັ້ງທໍາອິດ ຕ້ອງໄດ້ດໍາເນີນການກວດກາພາຍໃນເວລາຊ້າສຸດ 30 ວັນລັດຖະການ ພາຍຫຼັງທີ່ໄດ້ມີການແຈ້ງນັດໝາຍ ຈາກເຈົ້າໜ້າທີ່ບັນຊີ ກ່ຽວກັບ ການລົງກວດກາກັບທີ່ ໃຫ້ຫົວໜ່ວຍວິສາຫະກິດ, ບໍ່ດັ່ງນັ້ນຈະມີການກ່າວເຕືອນ ແລະ ດໍາເນີນມາດຕະການອື່ນໆ ຕາມລະບຽບກົດ ໝາຍ ຕໍ່ຫົວໜ່ວຍທີ່ບໍ່ໃຫ້ຄວາມຮ່ວມມື. ພາຍຫຼັງມີການດໍາເນີນການກວດກາ ຫົວໜ່ວຍຖືບັນຊີ ແລະ ເຈົ້າໜ້າທີ່ບັນຊີ ຕ້ອງເຮັດບົດບັນທຶກຮ່ວມກັນ ພ້ອມທັງປະກອບເອກະສານຄົບຖ້ວນ ໃຫ້ສໍາເລັດພາຍໃນເວລາຊ້າສຸດ 45 ວັນລັດຖະການ ແລະ ອອກໃບຕິດຕາມການຖືບັນຊີ ໃຫ້ສໍາເລັດຊ້າສຸດ 5 ວັນລັດຖະການ ພາຍຫຼັງສໍາເລັດບົດບັນທຶກ.2. ສໍາລັບຫົວໜ່ວຍທີ່ເຄີຍໄດ້ມີ ການຕິດຕາມກວດກາການຖືບັນຊີ (ມີໃບຕິດຕາມການຖືບັນຊີປະຈໍາປີ) ໃຫ້ປະຕິບັດຕາມຂັ້ນຕອນດັ່ງນີ້: - ກວດກາຕາມເອກະສານ ແລະ ຖ້າຈໍາເປັນຕ້ອງມີການກວດກາ ເອກະສານການບັນຊີອື່ນ ເພື່ອເປັນຫຼັກຖານຢັ້ງຢືນການແກ້ໄຂຂໍ້ຄົງຄ້າງ ກໍ່ໃຫ້ລົງກວດກາກັບທີ່ຕື່ມອີກ;- ເຮັດບົດບັນທຶກເກັບກໍາຂໍ້ມູນການຈັດຕັ້ງປະຕິບັດວຽກງານບັນຊີ;- ອອກໃບຕິດຕາມການຖືບັນຊີປະຈໍາປີ.ພາຍຫຼັງມີການດໍາເນີນການກວດກາ ຫົວໜ່ວຍຖືບັນຊີ ແລະ ເຈົ້າໜ້າທີ່ບັນຊີ ຕ້ອງເຮັດບົດບັນທຶກຮ່ວມກັນ ພ້ອມທັງປະກອບເອກະສານຄົບຖ້ວນ ໃຫ້ສໍາເລັດພາຍໃນເວລາຊ້າສຸດ 30 ວັນລັດຖະການ ແລະ ອອກໃບຕິດຕາມການຖືບັນຊີ ໃຫ້ສໍາເລັດຊ້າສຸດ 5 ວັນລັດຖະການ ພາຍຫຼັງສໍາເລັດບົດບັນທຶກ (ໝວດທີ 3, ຂໍ້ 12 ຂອງບົດແນະນໍາ ເລກທີ 0928). |

| **ຄ່າທໍານຽມສໍາລັບການຍື່ນຂໍເອກະສານ** | | | | |
|---|---|---|---|---|
| **ມີຄ່າໃບຄໍາຮ້ອງ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທໍານຽມທາງວິຊາການ** | **ຄ່າແບບຟອມຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 100000.00 | 0.00 | 0.00 | 100000.00 |
| **Comments** | ອີງຕາມ ໝວດທີ IV ຂໍ້ 16 ຂອງບົດແນະນໍາ ການອອກໃບຕິດຕາມການຖືບັນຊີຂອງຫົວໜ່ວຍຖືບັນຊີວິສາຫະກິດ ເລກທີ 0928 ແລະ ນິຕິກໍາກ່ຽວຂ້ອງ ທີ່ຖືກຮັບຮອງເປັນແຕ່ລະໄລຍະ. | | | |
| **ຄ່າບໍລິການເພີ່ມເຕີມ** | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |

| | |
|---|---|
| **ຄຳ ເຫັນຄ່າ ທຳ ນຽມເພີ່ມເຕີມ** | |

| **ຄ່າທຳນຽມສຳລັບການຂໍຕໍ່ອາຍຸເອກະສານ** | | | | |
|---|---|---|---|---|
| **ມີຄ່າຕໍ່ອາຍຸເອກະສານ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າໃບຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳເຫັນ** | ອີງຕາມຄຳແນະນຳຂອງເຈົ້າໜ້າທີ່ | | | |
| ຄ່າໃຊ້ຈ່າຍອື່ນໆ | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳ ເຫັນກ່ຽວກັບຄ່າ ທຳ ນຽມຕໍ່ອາຍຸເພີ່ມເຕີມ** | | | | |